ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ
ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ 0377 /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 21 MAY 2021

## ແຈ້ງການ

ເຖິງ: - ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ.
- ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ.
- ບັນດາຫົວໜ່ວຍວິສາຫະກິດທີ່ດໍາເນີນທຸລະກິດການຄ້າຂາຍຍົກ-ຂາຍຍ່ອຍ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການອະນຸຍາດດໍາເນີນກິດຈະການຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ ໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19.

- ອີງຕາມຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ສະບັບເລກທີ 15/ນຍ ລົງວັນທີ 21/4/2021;
- ອີງຕາມແຈ້ງການ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ528/ຫສນຍ, ລົງວັນທີ 20 ພຶດສະພາ 2021.
- ອີງຕາມແຈ້ງການ ກະຊວງສາທາລະນະສຸກ ກ່ຽວກັບ ການກໍານົດເຂດລະບາດ ເພື່ອປ້ອງກັນ ແລະ ຄວບຄຸມການລະບາດ ຂອງພະຍາດ COVID-19 ສະບັບເລກທີ 0488/ສທ, ລົງວັນທີ 20 ພຶດສະພາ 2021.

ເພື່ອຜັນຂະຫຍາຍຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 15/ນຍ ລົງວັນທີ 21/4/2021, ເພື່ອໃຫ້ສອດຄ່ອງກັບເນື້ອໃນແຈ້ງການຂອງກະຊວງສາທາລະນະສຸກ ເລກທີ 0488/ສທ, ລົງວັນທີ 20 ພຶດສະພາ 2021. ໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຂອງຂະແໜງອຸດສາຫະກໍາ ແລະ ການຄ້າ: ໃນການຕິດຕາມ, ກວດກາ ແລະ ການຄຸ້ມຄອງຮ້ານຄ້າຂາຍຍົກ-ຂາຍຍ່ອຍເປັນຕົ້ນ: ຕະຫຼາດ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານສະດວກຊື້ ແລະ ຮ້ານຄ້າທົ່ວໄປ.

### ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ອອກແຈ້ງການດັ່ງນີ້:

**I. ການກໍານົດເຂດການລະບາດ**

ກ. ເຂດ/ບ້ານສີແດງ:

1. ອະນຸຍາດດໍາເນີນກິດຈະການຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ ທີ່ຂາຍສິນຄ້າປະເພດສະບຽງອາຫານ, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ, ຮ້ານຂາຍເຄື່ອງມືຮັບໃຊ້ການຜະລິດກະສິກໍາ ຕັ້ງຢູ່ ຫຼື ບໍ່ຕັ້ງຢູ່ ໃນສູນການຄ້າ,

ຮ້ານສັບພະສິນຄ້າ, ຮ້ານສະດວກຊື້, ຕະຫຼາດສົດ, ປ້ຳນ້ຳມັນເຊື້ອໄຟ ແລະ ຮ້ານຈຳໜ່າຍອາຍແກັດຫຸງຕົ້ມ; ຜູ້ທີ່ຈະໃຫ້ບໍລິການຂາຍສິນຄ້າຕ້ອງແມ່ນຜູ້ທີ່ພັກອາໄສຢູ່ໃນເຂດນີ້ເທົ່ານັ້ນ. ນອກນັ້ນແມ່ນໃຫ້ປິດບໍລິການຊົ່ວຄາວ.

2. ກຳນົດເວລາ ເປີດ-ປິດ ໃຫ້ບັນດາຕະຫຼາດ ແລະ ຮ້ານຄ້າ ດັ່ງນີ້:

- ຕະຫຼາດສົດ ອະນຸຍາດໃຫ້ເປີດແຕ່ 6:00 ໂມງ ຫາ 17:00 ໂມງ;
- ສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 10:00-18:00 ໂມງ;
- ຮ້ານຊຸບເປີ້ມາເກັດ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າອະນຸຍາດໃຫ້ເປີດແຕ່ 9:00-18:00 ໂມງ;
- ຮ້ານມິນິມາດ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 7:00-18:00 ໂມງ;
- ຮ້ານຄ້າຂາຍຍ່ອຍ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 7:00-18:00 ໂມງ;
- ຮ້ານຄ້າຂາຍຍົກ ອະນຸຍາດໃຫ້ເປີດແຕ່ 8:00-16:00 ໂມງ.

**ຂ. ເຂດ/ບ້ານສີເຫຼືອງ:**

1. ອະນຸຍາດດຳເນີນກິດຈະການຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ ທີ່ຂາຍສິນຄ້າປະເພດສະບຽງອາຫານ, ຮ້ານຂາຍສິນຄ້າອຸປະໂພກ-ບໍລິໂພກທົ່ວໄປ, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ, ຮ້ານຂາຍເຄື່ອງມືຮັບໃຊ້ການຜະລິດກະສິກຳ ຕັ້ງຢູ່ ຫຼື ບໍ່ຕັ້ງຢູ່ ໃນສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານສະດວກຊື້, ຕະຫຼາດສົດ, ປ້ຳນ້ຳມັນເຊື້ອໄຟ ແລະ ຮ້ານຈຳໜ່າຍອາຍແກັດຫຸງຕົ້ມ.

2. ກຳນົດເວລາ ເປີດ-ປິດ ໃຫ້ບັນດາຕະຫຼາດ ແລະ ຮ້ານຄ້າ ດັ່ງນີ້:

- ຕະຫຼາດສົດ ອະນຸຍາດໃຫ້ເປີດແຕ່ 6:00 ໂມງ ຫາ 18:00 ໂມງ;
- ສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 9:00-18:00 ໂມງ;
- ຮ້ານຊຸບເປີ້ມາເກັດ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າອະນຸຍາດໃຫ້ເປີດແຕ່ 8:00-19:00 ໂມງ;
- ຮ້ານມິນິມາດ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 6:00-20:00 ໂມງ;
- ຮ້ານຄ້າຂາຍຍ່ອຍ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 6:00-20:00 ໂມງ;
- ຮ້ານຄ້າຂາຍຍົກ ອະນຸຍາດໃຫ້ເປີດແຕ່ 7:00-17:00 ໂມງ.

**ຄ. ເຂດ/ບ້ານສີຂຽວ:**

1. ອະນຸຍາດດຳເນີນກິດຈະການຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍ ທີ່ຂາຍສິນຄ້າປະເພດສະບຽງອາຫານ, ຮ້ານຂາຍສິນຄ້າອຸປະໂພກ-ບໍລິໂພກທົ່ວໄປ, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ, ຮ້ານຂາຍເຄື່ອງມືຮັບໃຊ້ການຜະລິດກະສິກຳ ຕັ້ງຢູ່ ຫຼື ບໍ່ຕັ້ງຢູ່ ໃນສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານສະດວກຊື້, ຕະຫຼາດສົດ ຫຼື ຕະຫຼາດຂາຍເຄື່ອງກະສິກຳ, ປ້ຳນ້ຳມັນເຊື້ອໄຟ ແລະ ຮ້ານຈຳໜ່າຍອາຍແກັດຫຸງຕົ້ມ.

2. ກຳນົດເວລາ ເປີດ-ປິດ ໃຫ້ບັນດາຕະຫຼາດ ແລະ ຮ້ານຄ້າ ດັ່ງນີ້:

- ຕະຫຼາດສົດ ອະນຸຍາດໃຫ້ເປີດແຕ່ 5:00 ໂມງ ຫາ 19:00 ໂມງ;
- ສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 9:00-19:00 ໂມງ;
- ຮ້ານຊຸບເປີ້ມາເກັດ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າອະນຸຍາດໃຫ້ເປີດແຕ່ 7:00-20:00 ໂມງ;
- ຮ້ານມິນິມາດ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 6:00-22:00 ໂມງ;
- ຮ້ານຄ້າຂາຍຍ່ອຍ ທີ່ບໍ່ຕັ້ງຢູ່ໃນສູນການຄ້າ ແລະ ຮ້ານສັບພະສິນຄ້າ ອະນຸຍາດໃຫ້ເປີດແຕ່ 6:00-22:00 ໂມງ;
- ຮ້ານຄ້າຂາຍຍົກ ອະນຸຍາດໃຫ້ເປີດແຕ່ 6:00-18:00 ໂມງ.

## II. ມາດຕະການປ້ອງກັນສະກັດກັ້ນ ແລະ ຄວບຄຸມ:

ເພື່ອຮັບມືກັບການແຜ່ລະບາດຂອງພະຍາດ COVID-19 ສໍາລັບຫົວໜ່ວຍທຸລະກິດທີ່ໄດ້ຮັບອະນຸຍາດໃຫ້ເປີດ ຕ້ອງປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້:

### 1. ສະຖານທີ່ ແລະ ອຸປະກອນ:

1) ໃຫ້ແຍກປະຕູທາງເຂົ້າ ແລະ ທາງອອກ ຢ່າງຈະແຈ້ງ, ສໍາລັບປະຕູທາງເຂົ້າ ຕ້ອງຈັດໃຫ້ມີການວັດແທກອຸນຫະພູມ ແລະ ມີເຈວລ້າງມື ຫຼື ເຫຼົ້າສໍາລັບຂ້າເຊື້ອ ໄວ້ບໍລິການສໍາລັບຜູ້ມາໃຊ້ບໍລິການ ແລະ ພະນັກງານ;
2) ຕ້ອງກໍານົດການຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດຂຶ້ນໄປ ຂອງຜູ້ມາໃຊ້ບໍລິການ, ສໍາລັບເຂດພື້ນທີ່ສີແດງ ຕ້ອງຈໍາກັດຈໍານວນຄົນຜູ້ທີ່ມາໃຊ້ບໍລິການ ແລະ ກໍານົດໄລຍະຫ່າງ 02 ແມັດຂຶ້ນໄປ.
3) ບໍລິເວນໂຕະຈ່າຍເງິນ ຕ້ອງມີເຈວລ້າງມື ຫຼື ເຫຼົ້າສໍາລັບຂ້າເຊື້ອ ເພື່ອໃຫ້ບໍລິການພາຍຫຼັງຈ່າຍເງິນແລ້ວ;
4) ອຸປະກອນ ແລະ ເຄື່ອງໃຊ້ທີ່ມີການສໍາຜັດເລື້ອຍໆ ເຊັ່ນ: ກະຕ່າ ແລະ ລໍ້ຍູ້ເຄື່ອງ, ບ່ອນກົດລິບ, ລະບຽງ ຫຼື ຮາວປະຕູຫ້ອງນໍ້າ, ຫ້ອງນໍ້າ ແລະ ອື່ນໆ ຕ້ອງອະນາໄມ ເຊັດ, ສວຍ ແລະ ແລງ ດ້ວຍນໍ້າຢາຂ້າເຊື້ອ ເປັນຕົ້ນ ໂຊດຽມຮາຍໂປກໍ່ຣິດ (Sodium Hypochlorite) 0,1%, ໄຮເຕີ ຫຼື ຢາຂ້າເຊື້ອທີ່ໄດ້ມາດຕະຖານ ທີ່ຜູ້ປະກອບການມີ;

### 2. ສໍາລັບຜູ້ປະກອບການ:

1) ຕ້ອງຈັດໃຫ້ມີການກວດກັ່ນກອງ ແລະ ວັດແທກອຸນຫະພູມພະນັກງານກ່ອນເຂົ້າເຮັດວຽກປະຈໍາວັນ ຫາກພົບວ່າ ພະນັກງານຜູ້ໃດມີອຸນຫະພູມສູງກວ່າ 37.5 ອົງສາເຊ ຄວນໃຫ້ພັກຜ່ອນຢູ່ເຮືອນ ແລະ ຫາກມີອາການໄຂ້, ໄອ, ຫັນໃຈຍາກ ຕ້ອງໃຫ້ໄປກວດຢູ່ໂຮງໝໍທີ່ຖືກກໍານົດເປັນບ່ອນກວດພະຍາດ COVID-19;
2) ຕ້ອງຕິດປ້າຍ ຫຼື ແຈ້ງບອກໃຫ້ຜູ້ມາໃຊ້ບໍລິການໃສ່ຜ້າອັດປາກ-ດັງ ແລະ ວັດແທກອຸນຫະພູມກ່ອນເຂົ້າໃຊ້ບໍລິການໃນຮ້ານ, ຕ້ອງມີສະຖານທີ່ບໍລິການຜ້າອັດປາກ-ດັງໃຫ້ແກ່ຜູ້ມາໃຊ້ບໍລິການໃນກໍລະນີທີ່ບໍ່ໄດ້ກະກຽມມາ;
3) ຕ້ອງໃຫ້ຂໍ້ມູນ, ຄວາມຮູ້, ຄໍາແນະນໍາ ດ້ວຍການປະຊາສໍາພັນ ກ່ຽວກັບ ການປ້ອງກັນການລະບາດພະຍາດ COVID-19 ໃຫ້ກັບຜູ້ທີ່ເຂົ້າມາໃຊ້ບໍລິການ;
4) ຈັດໃຫ້ມີເຈວລ້າງມື ຫຼື ເຫຼົ້າສໍາລັບຂ້າເຊື້ອ ໄວ້ປະຕູທາງເຂົ້າ, ຫ້ອງນໍ້າ, ບໍລິເວນໂຕະຈ່າຍເງິນ ເພື່ອບໍລິການໃຫ້ຜູ້ມາໃຊ້ບໍລິການ ແລະ ພະນັກງານຂອງຮ້ານ;
5) ພະນັກງານທຸກຄົນຕ້ອງສວມໃສ່ຜ້າອັດປາກ-ດັງ, ຖົງມື ຫຼື ອຸປະກອນ ປ້ອງກັນການຕິດເຊື້ອພະຍາດ COVID-19 ໃນການໃຫ້ບໍລິການແກ່ລູກຄ້າ, ລວມທັງໃນເວລາເກັບມ້ຽນເຄື່ອງໃນຮ້ານ ແລະ ອະນາໄມອຸປະກອນ ໂດຍສະເພາະໃນບໍລິເວນທີ່ມີຜູ້ສໍາຜັດເລື້ອຍໆ ດ້ວຍນໍ້າຢາຂ້າເຊື້ອ ເຊັ່ນ: ໂຊດຽມຮາຍໂປກໍ່ຣິດ (Sodium Hypochlorite) 0,1% ຫຼື ຢາຂ້າເຊື້ອທີ່ໄດ້ມາດຕະຖານອື່ນໆ ທີ່ຜູ້ປະກອບການມີ;
6) ຕ້ອງແຕ່ງຕັ້ງພະນັກງານຮັບຜິດຊອບພົວພັນປະສານງານສະເພາະວຽກປ້ອງກັນ ແລະ ຄວບຄຸມການແຜ່ລະບາດພະຍາດ COVID-19 ພ້ອມດ້ວຍກໍານົດເບີໂທຕິດຕໍ່ ແລ້ວແຈ້ງໃຫ້ບັນດາຫ້າງຮ້ານຕ່າງໆໃນຕະຫຼາດ ຫຼື ສູນການຄ້າ, ຮ້ານສັບພະສິນຄ້າຮັບຊາບ ແລະ ສາມາດພົວພັນປະສານງານໃນກໍລະນີພົບຜູ້ສົງໃສຕິດເຊື້ອພະຍາດ COVID-19;
7) ພະນັກງານທີ່ຮັບຜິດຊອບແຕ່ງຕັ້ງ ຕ້ອງກວດກາຈໍານວນຄົນທີ່ເຂົ້າມາໃຊ້ບໍລິການ ບໍ່ໃຫ້ແອອັດ ໃນກໍລະນີ ທີ່ມີຜູ້ເຂົ້າມາໃຊ້ບໍລິການຫຼາຍ ແມ່ນໃຫ້ຈໍາກັດ ຈໍານວນຕາມຄວາມເໝາະສົມຂອງຮ້ານຄ້າ;

3. ສໍາລັບຜູ້ມາໃຊ້ບໍລິການ:

1) ທຸກຄົນທີ່ເຂົ້າມາໃຊ້ບໍລິການ ຕ້ອງໄດ້ຮັບການວັດແທກອຸນຫະພູມ ຖ້າພົບວ່າມີອຸນຫະພູມສູງກວ່າ 37.5 ອົງສາເຊ ແມ່ນບໍ່ອະນຸຍາດໃຫ້ເຂົ້າໃນຮ້ານ;

2) ຕ້ອງລ້າງມືດ້ວຍເຈວລ້າງມື ຫຼື ເຫຼົ້າສໍາລັບຂ້າເຊື້ອ ທີ່ຮ້ານກະກຽມໄວ້ ແລະ ໃສ່ຜ້າອັດປາກ-ດັງ;

3) ຕ້ອງຮັກສາໄລຍະຫ່າງຂອບເຂດລັດສະໝີ ຢ່າງໜ້ອຍ 01 ແມັດ ຂຶ້ນໄປ;

4) ການໄອ-ຈາມໃນຮ້ານຄ້າ ຕ້ອງປະຕິບັດຕາມຫຼັກການສາທາລະນະສຸກທີ່ໄດ້ວາງອອກໃນໄລຍະການລະບາດຂອງພະຍາດ COVID-19;

5) ເວລາກັບເຮືອນຕ້ອງໄດ້ປະຕິບັດຫຼັກການສາທາລະນະສຸກທີ່ໄດ້ວາງອອກ ເຊັ່ນ: ລ້າງມື, ປ່ຽນເຄື່ອງ ແລະ ອາບນ້ຳ.

**III. ການຈັດຕັ້ງປະຕິບັດ**

1. ມອບໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການໂຄສະນາເຜີຍແຜ່ແຈ້ງການສະບັບນີ້ໃຫ້ແກ່ບັນດາຫົວໜ່ວຍວິສາຫະກິດ ລວມທັງປະຊາຊົນຜູ້ມາໃຊ້ບໍລິການໃຫ້ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ; ພ້ອມກັນນັ້ນ, ຊຸກຍູ້ສົ່ງເສີມຜູ້ປະກອບການທີ່ມີເງື່ອນໄຂໃຫ້ຂາຍສິນຄ້າທົ່ວໄປຜ່ານສື່ອອນລາຍ ເພື່ອຫຼຸດຄວາມແອອັດໃນການໄປຊື້ສິນຄ້າຕົວຈິງໃນຫ້ອງຕະຫຼາດສູນການຄ້າ ແລະ ຮ້ານສັບພະສິນຄ້າ ແຕ່ຕ້ອງຮັບປະກັນດ້ານຄຸນນະພາບ, ຄວາມສະອາດ ແລະ ຄວາມປອດໄພຂອງສິນຄ້າ;

2. ມອບໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ສົມທົບກັບຄະນະສະເພາະກິດຕາມຂັ້ນຂອງຕົນ ສາມາດກໍານົດຈຸດຈໍາໜ່າຍສິນຄ້າອຸປະໂພກ-ບໍລິໂພກນອກຈາກຕະຫຼາດ ແລະ ຮ້ານຄ້າທີ່ໄດ້ກ່າວມາຂ້າງເທິງທີ່ເຫັນວ່າມີຄວາມຈໍາເປັນ ຕາມສະພາບການລະບາດ ແລະ ຄວາມສ່ຽງຢູ່ພາຍໃນແຂວງຂອງຕົນ;

3. ມອບໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ຕິດຕາມ, ກວດກາ ແລະ ສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດແຈ້ງການສະບັບນີ້. ຖ້າຫາກການຈັດຕັ້ງປະຕິບັດພົບບັນຫາ ຫຼື ຂໍ້ຫຍຸ້ງຍາກ ໃຫ້ປະສານຫາຄະນະສະເພາະກິດຂອງແຂວງ, ເມືອງ ຂອງຕົນ ຂໍທິດຊີ້ນໍາເພື່ອຄວາມເປັນເອກະພາບ ຫຼື ສາມາດສະເໜີຫາຄະນະສະເພາະກິດຂອງກະຊວງອຸດສາຫະກໍາ ແລະ ການຄ້າ;

4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ໃນກໍລະນີ ມີການປ່ຽນແປງ ກະຊວງອຸດສາຫະກໍາ ແລະ ການຄ້າ ຈະແຈ້ງໃຫ້ຊາບຕື່ມເປັນແຕ່ລະໄລຍະ.

**ຮອງລັດຖະມົນຕີ**
**ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19**

ກະຊວງອຸດສາຫະກໍາ ແລະ ການຄ້າ
ຮອງລັດຖະມົນຕີ

**ສົມຈິດ ອິນທະມິດ**